ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ສຳນັກງານປົກຄອງແຂວງ

ເລກທີ 201 /ຈຂ.ຊຂ

ວັນທີ 14/03/2015

# ຂໍ້ຕົກລົງ

## ວ່າດ້ວຍ ການອະນຸມັດໃຫ້ປະຕິບັດ

## ເກັບຄ່າຄຸ້ມຄອງ ໝໍ້ແທກນໍ້າປະປາ ຢູ່ແຂວງຊຽງຂວາງ ປີ 2015.

- ອີງຕາມສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫລວງ ທີ່ໄດ້ລະບຸໄວ້ໃນໝວດທີ III ມາດຕາ 14 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ.
- ອີງຕາມໃບສະເໜີ ຂອງລັດວິສາຫະກິດນໍ້າປະປາແຂວງຊຽງຂວາງ ສະບັບເລກທີ 30/ນປປ.ຊຂ, ລົງວັນທີ 18 ກຸມພາ 2015.

## ເຈົ້າແຂວງ ແຂວງຊຽງຂວາງ ຕົກລົງ:

**ມາດຕາ 01:** ຕົກລົງໃຫ້ລັດວິສາຫະກິດນໍ້າປະປາແຂວງຊຽງຂວາງ ເກັບຄ່າຄຸ້ມຄອງ ໝໍ້ແທກນໍ້າປະປາ ລາຍລະອຽດຄື:

- ຂະໜາດເສັ້ນຜ່າສູນກາງ 50ມມ ຂຶ້ນໄປ ປະຕິບັດລາຄາ 9.000 ກີບ ຕໍ່ ເດືອນ.
- ຂະໜາດເສັ້ນຜ່າສູນກາງ 25ມມ ປະຕິບັດລາຄາ 3.500 ກີບ ຕໍ່ ເດືອນ.
- ຂະໜາດເສັ້ນຜ່າສູນກາງ 20ມມ ປະຕິບັດລາຄາ 3.000 ກີບ ຕໍ່ ເດືອນ.
- ຂະໜາດເສັ້ນຜ່າສູນກາງ 18ມມ ປະຕິບັດລາຄາ 2.000 ກີບ ຕໍ່ ເດືອນ.

**ມາດຕາ 02:** ມອບໃຫ້ລັດວິສາຫະກິດນໍ້າປະປາແຂວງຊຽງຂວາງ ເປັນເຈົ້າການ ອອກແຈ້ງການ ໂຄສະນາເພື່ອ ໃຫ້ທົ່ວສັງຄົມຮັບຊາບ ແລະ ເປັນເຈົ້າການຈັດຕັ້ງ ປະຕິບັດ ນັບແຕ່ ການຄິດໄລ່ຄ່ານໍ້າປະປາ ເດືອນ ກຸມພາ ປີ 2015 ເປັນຕົ້ນໄປ.

**ມາດຕາ 03:** ການຈັດຕັ້ງທຸກພາກສ່ວນ ທັງພາກລັດ ແລະ ເອກະຊົນ, ຕະຫລອດຮອດປະຊາຊົນ ທີ່ຊົມໃຊ້ການບໍລິການນໍ້າປະປາ ຢູ່ພາຍໃນແຂວງຊຽງຂວາງ ຈົ່ງຮັບຮູ້ ແລະ

ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ສຳເລັດຜົນເປັນຢ່າງດີ.

**ມາດຕາ 04: ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ ແຂວງຊຽງຂວາງ

ພົຈວ. ດຣ. ເສີມສຸກ ສົມພະວົງ

**ບ່ອນນຳສົ່ງ:**

1. ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ1 ສະບັບ " ເພື່ອຮັບຊາບ "
2. ລັດວິສາຫະກິດນ້ຳປະປາແຂວງຊຽງຂວາງ 1 ສະບັບ " ເພື່ອຈັດຕັ້ງປະຕິບັດ "
3. ບັນດາ ພະແນກການ ກົມກອງພາຍໃນແຂວງ ຫ້ອງການລະ 1 ສະບັບ " ເພື່ອຮັບຊາບ "
4. ອົງການປົກຄອງບັນດາເມືອງທີ່ມີສາຂານ້ຳປະປາ ເມືອງລະ1 ສະບັບ " ເພື່ອຮັບຊາບ "
5. ອົງການປົກຄອງບັນດາບ້ານ ທີ່ມີລະບົບນ້ຳປະປາແລ້ວ ບ້ານລະ 1 ສະບັບ " ເພື່ອຮັບຊາບ "
6. ເກັບມ້ຽນ 2 ສະບັບ " ເພື່ອສຳເນົາ "